ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ຫ້ອງການ

ເລກທີ 0483 /ຫອຄ.ນຄຕ

ນະຄອນຫຼວງວຽງຈັນ, ວັນທີ 25 ມີນາ 2020

# ໜັງສືແຈ້ງການ

**ເຖິງ:** - ຫ້ອງການ, ບັນດາກົມ, ສະຖາບັນ.

- ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ.
- ພະນັກງານ-ລັດຖະກອນທົ່ວຂະແໜງອຸດສາຫະກຳ ແລະ ການຄ້າ.
- ພໍ່ແມ່ປະຊາຊົນ, ທະຫານ, ຕຳຫຼວດ ໃນຂອບເຂດທົ່ວປະເທດ.

**ເລື່ອງ:** ຢຸດຕິການປ່ອຍຂ່າວທີ່ບໍ່ມີມູນຄວາມຈິງຂອງບຸກຄົນທີ່ບໍ່ຫວັງດີ ທີ່ກ່າວຫາວ່າມີພະນັກງານ ກະຊວງອຸດສາຫະກຳ ແລະ ການຄ້າ ຕິດເຊື້ອພະຍາດອັກເສບປອດຈາກເຊື້ອຈຸລະໂຣກສາຍພັນໃໝ່ ຫຼື COVID-19.

- ອີງຕາມຂໍ້ຕົກລົງຂອງລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 1273/ອຄ, ລົງວັນທີ 25 ກໍລະກົດ 2016 ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງຫ້ອງການກະຊວງອຸດສາຫະກຳ ແລະ ການຄ້າ.

ຫ້ອງການ ກະຊວງອຸດສາຫະກຳ ແລະ ການຄ້າ ຂໍຖືເປັນກຽດແຈ້ງມາຍັງທ່ານຊາບ ດັ່ງນີ້:

1) ກະຊວງອຸດສາຫະກຳ ແລະ ການຄ້າ **ບໍ່ມີ** ກໍລະນີພະນັກງານຕິດຕິດເຊື້ອພະຍາດອັກເສບປອດຈາກເຊື້ອຈຸລະໂຣກສາຍພັນໃໝ່ ຫຼື COVID-19 ດັ່ງທີ່ມີການປ່ອຍຂ່າວຈາກບຸກຄົນບໍ່ຫວັງດີ ໃນບັນດາສື່ອອນລາຍຕ່າງໆ.
2) ກະຊວງອຸດສາຫະກຳ ແລະ ການຄ້າ ໄດ້ສົ່ງພະນັກງານ ຈຳນວນ 01 ທ່ານ ຄື ທ່ານ ນາງ ວິໄລພອນ ຊົມດາວົງ ຫົວໜ້າພະແນກນະໂຍບາຍການຄ້າຫຼາຍຝ່າຍ, ກົມນະໂຍບາຍການຄ້າຕ່າງປະເທດ ເຂົ້າຮ່ວມຝຶກອົບຮົມພາຍໃຕ້ຫົວຂໍ້ "Advanced Trade Policy Course" ຢູ່ ສຳນັກງານໃຫຍ່ອົງການການຄ້າໂລກ ທີ່ ເຈນີວາ, ປະເທດ ສະວິດ ລະຫວ່າງວັນທີ 27 ມັງກອນ ເຖິງ 20 ມີນາ 2020, ແຕ່ເນື່ອງຈາກສະພາບການລະບາດຂອງພະຍາດອັກເສບປອດຈາກເຊື້ອຈຸລະໂຣກສາຍພັນໃໝ່ ຫຼື COVID-19 ຈຶ່ງໄດ້ເຮັດໃຫ້ການສຳມະນາປິດລົງກ່ອນກຳນົດ ຄືໄດ້ປິດການຝຶກອົບຮົມລົງໃນວັນທີ 13 ມີນາ 2020. ສະນັ້ນ, ໃນວັນທີ 14 ມີນາ 2020 ຜູ້ກ່ຽວໄດ້ອອກເດີນທາງ ຈາກເຈນີວາ ເພື່ອກັບມາ ສປປ ລາວ ແລະ ໄດ້ເດີນທາງເຖິງ ສະໜາມບິນສາກົນວັດໄຕ, ນະຄອນຫຼວງວຽງຈັນ ໃນເວລາ 19:45 ໂມງ ຂອງວັນທີ 15 ມີນາ 2020 ດ້ວຍສາຍການບິນໄທ.
3) ໂດຍປະຕິບັດຕາມຄຳແນະນຳໃນໜັງສືແຈ້ງການຂອງຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ສະບັບເລກທີ 003/ສພກ, ລົງວັນທີ 2 ມີນາ 2020, ເມື່ອເດີນທາງມາເຖິງ ສປປ ລາວ, ຜູ້ກ່ຽວ ໄດ້ປະຕິບັດດັ່ງນີ້:

(1) ເຂົ້າພັກທີ່ສະຖານທີ່ກັກຕົວຄົນດຽວ ແລະ ໂທແຈ້ງສາຍດ່ວນໂຄວິດ (ສ່າຍດ່ວນ 166) ເພື່ອຝາກຂໍ້ມູນການເດີນທາງ, ແຈ້ງອາການເຈັບຄໍ ແລະ ຂໍກວດຫາເຊື້ອແຕ່ທາງສູນໃຫ້ຕິດຕາມອາການຕື່ມເພາະຫາກໍ່ມາຮອດ.

(2) ໃນລະຫວ່າງວັນທີ 16-21 ມີນາ 2020 ໄດ້ຕິດຕາມອາການດ້ວຍຕົວເອງ ຊຶ່ງຜົນແມ່ນ ບໍ່ມີໄຂ້ ແຕ່ຍັງເຈັບຄໍ ແລະ ໄດ້ປະສານຫາສາຍດ່ວນ 166_ເພື່ອຂໍໃຫ້ກວດກາຫາເຊື້ອພະຍາດໃຫ້ ແຕ່ໄດ້ຮັບຄຳຕອບວ່າໃຫ້ຕິດຕາມອາການຕື່ມອີກ ເພາະບໍ່ມີໄຂ້.

(3) ໃນວັນທີ 22 ມີນາ 2020 ໄດ້ຮັບແຈ້ງຂ່າວຈາກຜູ້ທີ່ເຂົ້າຮ່ວມຝຶກອົບຮົມດ້ວຍກັນວ່າທ່ານຮອງຫົວໜ້າສະຖາບັນຝຶກອົບຮົມ ຜູ້ທີ່ມາກ່າວປິດຝຶກອົບຮົມໃນວັນທີ 13 ມີນາ 2020 ຜົນກວດແມ່ນພົບເຊື້ອ COVID-19, ຈຶ່ງໄດ້ຕິດຕໍ່ໄປຫາສາຍດ່ວນ 166 ເພື່ອໃຫ້ປະສານຫາພາກສ່ວນກ່ຽວຂ້ອງ ເພື່ອຂໍກວດຫາເຊື້ອພະຍາດອີກເທື່ອໜຶ່ງ ແລະ ສຸດທ້າຍ ກໍໄດ້ຮັບອະນຸຍາດໃຫ້ກວດ.

(4) ໃນວັນທີ 23 ມີນາ 2020 ໄດ້ໄປກວດຫາເຊື້ອພະຍາດຢູ່ ໂຮງໝໍມິດຕະພາບ 150 ຕຽງ.

(5) ໃນວັນທີ 24 ມີນາ 2020 ໄດ້ຮັບຜົນກວດ ໃນເວລາ 09:30 ໂມງເຊົ້າ ຊຶ່ງ**ຜົນອອກມາເປັນລົບ ໝາຍວ່າ ບໍ່ຕິດເຊື້ອ** ແຕ່ທ່ານໝໍກໍ່ໄດ້ແນະນຳໃຫ້ສືບຕໍ່ດຳເນີນການກັກຕົວຈົນຄົບ 14 ວັນ.

4) ຫ້ອງການກະຊວງອຸດສາຫະກຳ ແລະ ການຄ້າ ຂໍຮຽກຮ້ອງມາຍັງພະນັກງານ-ລັດຖະກອນໃນທົ່ວຂະແໜງການກໍຄືພະນັກງານ-ລັດຖະກອນໃນຂອບເຂດທົ່ວປະເທດ ແລະ ປະຊາຊົນທຸກຊັ້ນຄົນ ຈົ່ງພິຈາລະນາຢ່າງຄັກແນ່ກ່ຽວກັບບັນດາຂໍ້ມູນທີ່ເຜີຍແຜ່ຢູ່ໃນບັນດາສື່ຕ່າງໆ ທີ່ບໍ່ແມ່ນຊື່ທາງການ ເພາະມັນຈະກໍ່ໃຫ້ເກີດຄວາມສັບສົນວຸ້ນວາຍໃຫ້ແກ່ອົງກອນ ກໍ່ຄືສັງຄົມ ດັ່ງກໍລະນີນີ້ .

5) ຫ້າມສືບຕໍ່ເຜີຍແຜ່ຂໍ້ມູນທີ່ບໍ່ມີມູນຄວາມຈິງນີ້, ຖ້າຝ່າຝືນຈະຖືກປະຕິບັດຕາມກົດໝາຍ ແລະ ລະບຽບການ.

ດັ່ງນັ້ນ, ຫ້ອງການກະຊວງອຸດສາຫະກຳ ແລະ ການຄ້າ ຈຶ່ງອອກໜັງສືແຈ້ງການສະບັບນີ້ມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມທາງຄວນດ້ວຍ.

**ຫົວໜ້າຫ້ອງການ**

ນ.ບານສະຕິ ເທບພະວົງ